ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບສະເໜີຂໍອະນຸຍາດ

**ຮຽນ : ທ່ານຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ທີ່ນັບຖື**

**ເລື່ອງ :** ……………………………………………………………………………………………………

……………………………………………………………………………………………………

## 1) ຂໍ້ມູນກ່ຽວກັບຜູ້ຂໍອະນຸຍາດ

ຊື່ ແລະ ນາມສະກຸນ ……………………………………………………………………ອາຍຸ …………………ປີ,
ອາຊີບ………………………………ບ່ອນເຮັດວຽກ……………………………………………………………
ປະຈຸບັນຢູ່ບ້ານ………………, ເມືອງ…………………………, ແຂວງ …………………………………………

## 2) ຂໍ້ມູນກ່ຽວກັບທີ່ຕັ້ງຂອງກິດຈະການ

ສະຖານທີ່ກິດຈະການຕັ້ງຢູ່ຖະໜົນ ……………………………………, ບ້ານ ……………………………………
ເມືອງ ………………………………, ນະຄອນຫຼວງວຽງຈັນ, ໂທລະສັບຕິດຕໍ່ ……………………………………
ປຸກສ້າງໃສ່ຕອນດິນເລກທີ…………………, ລົງວັນທີ ………………ໃບຕາດິນອອກຊື່……………………………
ສິດຂອງຜູ້ສະເໜີຕໍ່ຕອນດິນ: ☐ ເປັນເຈົ້າຂອງ, ☐ ໄດ້ຮັບສິດນຳໃຊ້, ☐ ເຊົ່າ ແລະ ອື່ນໆ ……………………………

## 3) ຂໍ້ມູນກ່ຽວກັບກິດຈະການ

ຈຸດປະສົງ ຫຼື ເປົ້າໝາຍການນຳໃຊ້ຂອງກິດຈະການ:……………………………………………………………
ລັກສະນະ ຫຼື ປະເພດຂອງກິດຈະການ:…………………………………………………………………………
ເນື້ອທີ່ຕິດໜ້າດິນຂອງກິດຈະການ: ……………ມ$^2$,ເນື້ອທີ່ນຳໃຊ້ທັງໝົດ: ………………ມ$^2$, ຈຳນວນຊັ້ນ: .....ຊັ້ນ
ຄວາມສູງຂອງອາຄານ ( ນັບຈາກພື້ນອາຄານທີ່ຕິດກັບໜ້າດິນ ຫາ ເພດານຊັ້ນສູງສຸດ ): ………………………ແມັດ

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ຮຽນສະເໜີມາຍັງທ່ານ ເພື່ອຄົ້ນຄວ້າ ແລະ ພິຈາລະນາຕາມສົມຄວນດ້ວຍ.

ນະຄອນຫຼວງວຽງຈັນ, ວັນທີ ………./…………/2019

**ນາຍບ້ານ** ………………  **ຜູ້ສະເໜີ**

**( ຢູ່ສະຖານທີ່ປຸກສ້າງ )**

➢ **ເອກະສານຄັດຕິດ ປະກອບມີ :**

1) ສຳເນົາໃບຕາດິນ ( ເຈ້ຍ F14 ) 3 ຊຸດ.
2) ໃບຢັ້ງຢືນທີ່ຢູ່ຜູ້ຂໍອະນຸຍາດ ຫຼື ( ບັດປະຈຳຕົວ, ສຳມະໂນຄົວ ຫຼື ພາສປອດໃນກໍລະນີເປັນຄົນຕ່າງປະເທດ ).
3) ແບບແຜນຜັງໂຄງການ ( ເຈ້ຍ A3 ) ທີ່ປະກອບດ້ວຍ: ແຜນຜັງບອກຈຸດທີ່ຕັ້ງທີ່ເປັນພາບຖ່າຍທາງອາກາດ ( ມາດຕາສ່ວນ 1/5000 ), ແຜນຜັງລວມ, ແຜນຜັງການຈັດສັນຕອນດິນ, ຮູບຕັດທຽບໃສ່ທາງ, ຮູບຕັດທຽບໃສ່ຕອນດິນ, ແຜນຜັງລະບົບລະບາຍນ້ຳຝົນ, ແຜນຜັງລະບົບບຳບັດນ້ຳເປື້ອນ, ແບບທາງດ້ານສະຖາປັດຕະຍະກຳ, ແບບໂຄງສ້າງ ແລະ ວຽກງານລະບົບຕ່າງໆ ເພື່ອກໍ່ສ້າງຄົບຊຸດ.
4) ສຳລັບແບບແຜນຜັງໂຄງການ ( ເຈ້ຍ A3 ) ທີ່ສະເໜີຂໍອະນຸຍາດ ຕ້ອງໄດ້ຜ່ານການຢັ້ງຢືນຈາກບໍລິສັດ ສຳຫຼວດ - ອອກແບບ ດ້ານເຄຫາສະຖານທີ່ ມີໃບອະນຸຍາດດຳເນີນທຸລະກິດທີ່ຖືກຕ້ອງ ເພື່ອໃຫ້ມີຄວາມຮັບຜິດຊອບຕໍ່ລະບຽບການ ແລະ ກົດໝາຍ.

*ຜູ້ສະເໜີຂໍອະນຸຍາດສາມາດດາວໂຫຼດແບບຟອມໃບສະເໜີຂໍອະນຸຍາດຈາກເວບໄຊສ໌ຂອງນະຄອນຫຼວງວຽງຈັນ ທີ່ເວບໄຊ: www.vientianecity.gov.la.com*

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເມືອງ .................................

ບ້ານ .................................                    ລົງວັນທີ .................................

# ສັນຍາ

## ລະຫວ່າງ ເຈົ້າຂອງກິດຈະການ ( ຜູ້ຂໍອະນຸຍາດ )

## ແລະ ຂະແໜງ ຄຸ້ມຄອງເຄຫາ - ຜັງເມືອງ ແລະ ສິ່ງແວດລ້ອມ

### I. ຂໍ້ມູນທົ່ວໄປກ່ຽວກັບກິດຈະການ ແລະ ຄວາມຮັບຜິດຊອບຂອງ " ຜູ້ຂໍອະນຸຍາດ "

- ຊື່ ແລະ ນາມສະກຸນ: ..........................................................................................................

- ປະຈຸບັນຢູ່ບ້ານ: ..............................., ເມືອງ:.................................., ແຂວງ:.........................................

- ສະຖານທີ່ຕັ້ງກິດຈະການຕັ້ງຢູ່ຖະໜົນ :..............................................., ບ້ານ:...........................................

- ເມືອງ:........................................, ນະຄອນຫຼວງວຽງຈັນ.

### II. ຄວາມຮັບຜິດຊອບຂອງເຈົ້າຂອງກິດຈະການ " ຜູ້ຂໍອະນຸຍາດ " ມີດັ່ງນີ້:

1. ໃນເວລາກ່ອນຈະດຳເນີນການກໍ່ສ້າງຕ້ອງສົມທົບກັບຜູ້ຮັບເໝົາກໍ່ສ້າງ ຕ້ອງໄດ້ເຮັດຮົ້ວຊົ່ວຄາວອ້ອມຂອບເຂດສະຖານທີ່ກໍ່ສ້າງ ເພື່ອຄວາມປອດໄພ ແລະ ສວຍງາມ.
2. ໃນກໍລະນີໂຄງການກໍ່ສ້າງຂະໜາດໃຫຍ່ ຕ້ອງໄດ້ສະເໜີຜ່ານແຜນຜັງລວມການຈັດສັນສະໜາມກໍ່ສ້າງນຳຂະແໜງ ຄຸ້ມຄອງ ເຄຫາ - ຜັງເມືອງ ແລະ ສິ່ງແວດລ້ອມ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ.
3. ຕ້ອງບໍ່ກອງວັດສະດຸກໍ່ສ້າງ ແລະ ສິ່ງເສດເຫຼືອອື່ນໆ ໃນຂອບເຂດສາທາລະນະທີ່ກາຍອອກນອກຮົ້ວຊົ່ວຄາວ.
4. ຕ້ອງບໍ່ສ້າງຄວາມເປິະເປື້ອນ ແລະ ເປເພເສຍຫາຍໃຫ້ແກ່ຖະໜົນ - ທົ່ນທາງ ແລະ ສິ່ງສາທາລະນຸໂພກຕ່າງໆ.
5. ໃນເວລາດຳເນີນການກໍ່ສ້າງຈະບໍ່ເຮັດໃຫ້ຮ່ອງລະບາຍນ້ຳອັດຕັນ ຫຼື ໄຫຼບໍ່ສະດວກ ແລະ ເປ່ເພເສຍຫາຍ.
6. ໃນກໍລະນີຫາກເກີດມີຜົນກະທົບຈາກການກໍ່ສ້າງ ເຮັດໃຫ້ຊັບສິນຂອງບຸກຄົນ, ນິຕິບຸກຄົນ, ຂອງລັດ ແລະ ພື້ນຖານໂຄງລ່າງຕ່າງໆ ເສຍຫາຍຕ້ອງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍ ເພື່ອສ້ອມແປງປັບປຸງຄືນໃຫ້ຢູ່ໃນສະພາບເດີມ.
7. ຕ້ອງໃຫ້ຄວາມຮ່ວມມື ໃນການສະແດງໃບອະນຸຍາດ ແລະ ເອກະສານປຸກສ້າງຄົບຊຸດ ໃນເວລາເຈົ້າໜ້າຕິດຕາມ ກວດກາ ຜັງເມືອງ ລົງໄປກວດກາ.
8. ໃນກໍລະນີຖ້າຫາກວ່າເຈົ້າຂອງກິດຈະການ ມີຈຸດປະສົງຢາກປ່ຽນແປງແບບ, ປ່ຽນແປງເປົ້າໝາຍການນຳໃຊ້ ຈາກທີ່ໄດ້ຮັບອະນຸຍາດແລ້ວນັ້ນ ຕ້ອງແຈ້ງຕໍ່ຂະແໜງ ຄຸ້ມຄອງເຄຫາ - ຜັງເມືອງ ແລະ ສິ່ງແວດລ້ອມ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເພື່ອກວດກາຄືນ ຕາມລະບຽບຄຸ້ມຄອງການປຸກສ້າງກຳນົດ.
9. ພາຍຫຼັງ ການປຸກສ້າງ ສຳເລັດ ພາຍໃນ 15 ວັນ ເຈົ້າຂອງກິດຈະການ ຕ້ອງສະເໜີຕໍ່ຂະແໜງ ຄຸ້ມຄອງເຄຫາ - ຜັງເມືອງ ແລະ ສິ່ງແວດລ້ອມ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເພື່ອລົງກວດກາການປຸກສ້າງຕົວຈິງອີກຄັ້ງໜຶ່ງ ເພື່ອອອກໃບຢັ້ງຢືນຄວາມຖືກຕ້ອງຂອງການປຸກສ້າງໃຫ້ ( ໃນກໍລະນີການປຸກສ້າງຖືກຕ້ອງຕາມການອະນຸຍາດ ), ໃບຢັ້ງຢືນຄວາມຖືກຕ້ອງແມ່ນເອະສານທີ່ສຳຄັນ, ທຸກໆການປຸກສ້າງ, ການສ້ອມແປງ, ຕໍ່ເຕີມ ແລະ ປ່ຽນແປງການນຳໃຊ້ຕ້ອງໄດ້ຮັບໃບອະນຸຍາດ ແລະ ໃບຢັ້ງຢືນຄວາມຖືກຕ້ອງ ຈຶ່ງຖືວ່າຖືກຕ້ອງຕາມລະບຽບຄຸ້ມຄອງຜັງເມືອງວາງອອກ ແລະ ມີຄຸນຄ່າສາມາດນຳໃຊ້ໄດ້ທາງດ້ານກົດໝາຍ.

## III. ຄວາມຮັບຜິດຊອບຂອງຂະແໜງ ຄຸ້ມຄອງເຄຫາ - ຜັງເມືອງ ແລະ ສິ່ງແວດລ້ອມ

1. ຕິດຕາມ ແລະ ກວດກາການກໍ່ສ້າງເປັນແຕ່ລະໄລຍະ, ຖ້າເຫັນວ່າການກໍ່ສ້າງບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງໃຫ້ລາຍງານການຈັດຕັ້ງ.
2. ປະຕິບັດມາດຕະການຕໍ່ພາກສ່ວນທີ່ລະເມີດລະບຽບຄຸ້ມຄອງການປຸກສ້າງ ໂດຍສະເພາະຜູ້ຂໍອະນຸຍາດ, ຜູ້ຮັບເໝົາກໍ່ສ້າງ ແລະ ຜູ້ຄຸ້ມຄອງດຳເນີນການກໍ່ສ້າງ ຈະຖືກປະຕິບັດວິໄນຕໍ່ການລະເມີດນັ້ນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 47-52ຂອງກົດໝາຍວ່າດ້ວຍຜັງເມືອງ, ມາດຕາ 79-84 ຂອງກົດໝາຍວ່າດ້ວຍການກໍ່ສ້າງ, ມາດຕາ 21 ຂອງລະບຽບຄຸ້ມຄອງການປຸກສ້າງ ແລະ ກົດລະບຽບຄຸ້ມຄອງຜັງເມືອງຕົວເມືອງວຽງຈັນຕາມຂັ້ນຕອນໃນແຕ່ລະກໍລະນີໜັກຫຼືເບົາ ດັ່ງນີ້.

- ໃນກໍລະນີ ບຸກຄົນ ທີ່ລະເມີດຕໍ່ລະບຽບ ຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປະຕິບັດມາດຕະການທາງວິໄນ, ປັບໃໝ ແລະ ດຳເນີນການຕາມຂັ້ນຕອນຂະບວນການຍຸຕິທຳ ຕາມລະບຽບ ກົດໝາຍ ໄດ້ກຳນົດໄວ້.
- ໃນກໍລະນີ ຫົວໜ່ວຍທຸລະກິດ, ນິຕິບຸກຄົນ ທີ່ລະເມີດຕໍ່ລະບຽບ ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກກ່າວເຕືອນ ແລະ ປະຕິບັດມາດຕະການທາງວິໄນຕໍ່ຫົວໜ່ວຍທຸລະກິດດັ່ງກ່າວ, ກ້າວໄປເຖິງ ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງໃຫ້ໂຈະທະບຽນວິສາຫະກິດ ແລະ ຖອນໃບອະນຸຍາດການດຳເນີນທຸລະກິດຕາມລຳດັບ.

## IV. ການຢັ້ງຢືນຮັບປະກັນການຕິດແປະການປຸກສ້າງ

1. ຜູ້ສະເໜີຂໍອະນຸຍາດປຸກສ້າງ ແມ່ນໄດ້ເອົາແບບແຜນຜັງການກໍ່ສ້າງທີ່ຈະກໍ່ສ້າງໄປນຳສະເໜີແຈ້ງຕໍ່ຜູ້ທີ່ຢູ່ຂ້າງ ຄຽງຮັບຮູ້ ແລະ ເປັນເອກະພາບກັນແລ້ວ ໂດຍຊ້ອງໜ້າພະຍານ ແລະ ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງ.
2. ການປຸກສ້າງຕ້ອງຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ຕອນດິນ ແລະ ສິ່ງປຸກສ້າງທີ່ຢູ່ຂ້າງຄຽງ.
3. ໃນກໍລະນີມີການເປເພເສຍຫາຍ ຫຼື ຮ້ອງຟ້ອງຈາກພາກສ່ວນຕ່າງໆ ອັນເນື່ອງມາຈາກກິດຈະການ ການກໍ່ສ້າງ, ຜູ້ຂໍອະນຸຍາດຮັບປະກັນວ່າຈະຮັບຜິດຊອບປັບປຸງ ແລະ ແກ້ໄຂ ໃຫ້ສຳເລັດພາຍໃນ 07 ວັນ.
4. ການຢັ້ງຢືນຮັບປະກັນການຕິດແປະຂ້າງຄຽງ ມີດັ່ງນີ້:

- ທິດຕາເວັນອອກຕິດກັບ:......................................., ລາຍເຊັນ:............................., ເບີໂທ:...................
- ທິດຕາເວັນຕົກຕິດກັບ:......................................., ລາຍເຊັນ:............................., ເບີໂທ:...................
- ທິດເໜືອຕິດກັບ:..............................................., ລາຍເຊັນ:............................., ເບີໂທ:...................
- ທິດໃຕ້ຕິດກັບ:................................................, ລາຍເຊັນ:............................., ເບີໂທ:...................

ດັ່ງນັ້ນ ຈຶ່ງໄດ້ເຮັດບົດບັນທຶກສັນຍາຜູກພັນ ແລະ ຢັ້ງຢືນການຕິດແປະ ສະບັບນີ້ໄວ້ ເພື່ອເປັນຫຼັກຖານ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງໃນຂັ້ນຕໍ່ໄປ.

| | | |
|---|---|---|
| **ຫົວໜ້າຂະແໜງ ຄຸ້ມຄອງເຄຫາ - ຜັງເມືອງ ແລະ ສິ່ງແວດລ້ອມ** | **ຢັ້ງຢືນນາຍບ້ານ ..................... ( ຢູ່ສະຖານທີ່ປຸກສ້າງ )** | **ຜູ້ສະເໜີ** |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເມືອງ ................................

ບ້ານ .................................... ເລກທີ ................../.................

# ໃບສະເໜີ

**ຮຽນ : ທ່ານຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ທີ່ນັບຖື**

**ເລື່ອງ: ສະເໜີຂໍໃຫ້ວິຊາການຂະແໜງ ຄຸ້ມຄອງເຄຫາ - ຜັງເມືອງ ແລະ ສິ່ງແວດລ້ອມລົງກວດກາກິດຈະການທີ່ກໍ່ສ້າງສໍາເລັດແລ້ວ ເພື່ອອອກຢັ້ງຢືນຄວາມຖືກຕ້ອງ**

- ອີງຕາມ ໃບອະນຸຍາດ ສະບັບເລກທີ .......................... / ຍທຂ. ນວ, ລົງວັນທີ ............................................

ຂ້າພະເຈົ້າຊື່ ທ້າວ/ນາງ:........................................................., ຢູ່ບ້ານ:..............................................
ເມືອງ:................................................, ນະຄອນຫຼວງວຽງຈັນ, ໂທລະສັບຕິດຕໍ່:................................................

**<u>ມີຈຸດປະສົງ:</u>** ສະເໜີຂໍໃຫ້ວິຊາການຂະແໜງ ຄຸ້ມຄອງເຄຫາ - ຜັງເມືອງ ແລະ ສິ່ງແວດລ້ອມ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ລົງກວດກາກິດຈະການທີ່ກໍ່ສ້າງສໍາເລັດແລ້ວ ເພື່ອອອກຢັ້ງຢືນຄວາມຖືກຕ້ອງ ໂດຍມີສະຖານທີ່ຕັ້ງຂອງກິດຈະການ ຕັ້ງຢູ່ໜ່ວຍ:...................., ຖະໜົນ:................................., ບ້ານ:........................................ ເມືອງ:..............................................., ນະຄອນຫຼວງວຽງຈັນ.

ດັ່ງນັ້ນ ຈຶ່ງໄດ້ຮ້ອງຮຽນສະເໜີມາຍັງທ່ານ ເພື່ອຄົ້ນຄວ້າ ພິຈາລະນາ ແລະ ອະນຸມັດຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ທີ່ ນະຄອນຫຼວງວຽງຈັນ, ວັນທີ.........../............./2019

**ຜູ້ສະເໜີ**

**ເອກະສານຄັດຕິດ ປະກອບມີ:**

1) ບົດບັນທຶກການລົງຕິດຕາມ ແລະ ກວດກາ.
2) ໃບອະນຸຍາດກິດຈະການ ( ສະບັບຕົ້ນກາແດງ ).
3) ແບບແຜນຜັງກິດຈະການທີ່ໄດ້ຮັບອະນຸຍາດ ( ສະບັບຕົ້ນກາແດງ ).

*ຜູ້ສະເໜີຂໍອະນຸຍາດສາມາດດາວໂຫຼດແບບຟອມໃບສະເໜີຂໍອະນຸຍາດຈາກເວບໄຊສ໌ຂອງນະຄອນຫຼວງວຽງຈັນ ທີ່ເວບໄຊ໌: www.vientianecity.gov.la.com*